# ຂໍ້ມູນກ່ຽວກັບການສັກຢາປ້ອງກັນໂຣກ

ການສັກຢາປ້ອງກັນໂຣກປ້ອງກັນເດັກຈາກພະຍາດທີ່ ຮ້າຍແຮງຫຼາຍຊນິດ ຊຶ່ງສືບຕໍ່ເກີດມີຢູ່ໃນຊຸມຊົນ ແລະ ຈາກພະຍາດເຫຼົ່ານີ້ທີ່ພວກເດັກນ້ອຍຍັງເຈັບປ່ວຍ ແລະ ເສັຍຊີວິດໄປໂດຍບໍ່ຈຳເປັນ.

ສະພາການຄົ້ນຄວ້າ ດ້ານອະນາມັຍແລະການແພດ ແຫ່ງຊາດ ແນະນຳໃຫ້ມີແຜນການ ການສັກຢາ ແຫ່ງຊາດສຳລັບເດັກທຸກໆຄົນ. ທ່ານຄວນໂອ້ລົມ ເຣື່ອງຂໍ້ແນະນຳເຫຼົ່ານີ້ກັບນາຍໝໍ ຫຼື ຄລີນິກໃນ ທ້ອງຖິ່ນຂອງທ່ານ **ແລະ/ຫຼື ເບິ່ງເວັບໄຊຕ໌ ສຸຂພາບ ຂອງຣັດ NSW www.health.nsw.gov.au ເພື່ອເບິ່ງ ແຜນການ ການສັກຢາແຫ່ງຊາດອັນປັດຈຸບັນ.**

ຢາສັກປ້ອງກັນໂຣກມີໄວ້ສຳລັບປ້ອງກັນເດັກຈາກ ໂຣກຄໍຕີບ ໂຣກບາດທະຍັກ ໂຣກໄອໄກ່ ໂຣກໂປລີໂອ ໂຣກຫັດ ໂຣກໝາກເບີດ ໂຣກຣູແບລລາ ໂຣກໄຂ້ຫວັດໃຫຍ່ ປະເພດ b (Hib), ໂຣກຕັບ ອັກເສບ ປະເພດ B, ໂຣກເຫຍື່ອຫຸ້ມສມອງອັກເສບ ປະເພດ C, ໂຣກປອດບວມ ແລະ ໂຣກໝາກສຸກ ໝາກໃສ. ຢາສັກເຫຼົ່ານີ້ມີໄວ້ໃຫ້ຢູ່ທີ່ນາຍໝໍໃນທ້ອງຖິ່ນ ຂອງທ່ານ ຕາມຫ້ອງການເທສບານບາງແຫ່ງ ໂຮງໝໍ ເດັກ ສູນອະນາມັຍຊຸມຊົນ ແລະ ສູນບໍຣິການ ການແພດ ອາບໍຣິຈິໂນລ.

ເດັກບາງຄົນອາດຈະມີອາການເປັນໄຂ້ໜ້ອຍນຶ່ງ ແລະ/ ຫຼືຮອຍແດງ ໃຄ່ແລະບວມຢູ່ບ່ອນຮອຍສັກຢາ. ກະຣຸນາຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ ຖ້າຫາກວ່າ ອາການໄຂ້ສູງກວ່າ 39ອົງສາ ຫຼື ຖ້າທ່ານກັງວົນກັບ ສະພາບການຂອງລູກທ່ານ.

ເດັກທາຣົກທຸກໆຄົນທີ່ໄດ້ລົງທະບຽນກັບແມດີແຄຣ໌ ກໍ ແມ່ນໄດ້ລົງທະບຽນກັບ ກອງທະບຽນ ສັກຢາ ປ້ອງກັນໂຣກຄົນອອັສເຕຣລຽນວັຍເດັກ (ACIR). ຫຼັງຈາກການສັກຢາປ້ອງກັນໂຣກແຕ່ລະຄັ້ງ ນາຍໝໍ ທ້ອງຖິ່ນຂອງທ່ານ ຫຼື ຄລີນິກຈະແຈ້ງທາງ ACIR ໃຫ້ຊາບເຖິງຂັ້ນສັກຢາປ້ອງກັນໂຣກຂອງເດັກ.

ACIR ຈະສົ່ງບັນທຶກປວັດການສັກຢາປ້ອງກັນໂຣກ ໄປໃຫ້ທ່ານໃນທັນທີທີ່ລູກທ່ານໄດ້ສັກຢາປ້ອງກັນໂຣກ ຈົນຄົບຕາມທີ່ໄດ້ກຳນົດໄວ້ຕອນເວລາອາຍຸ 4ປີ. ທ່ານຈະຖືກຂໍໃຫ້ເອົາບັນທຶກອັນນີ້ໄປຫາໂຮງຮຽນໃນ ມື້ທີ່ລູກທ່ານຈົດຊື່ເຂົ້າຮຽນ.

ຖ້າທ່ານບໍ່ໄດ້ຮັບບັນທຶກນີ້ ຫຼື ມີບັນຫາກັບບັນທຶກນີ້ ທ່ານສາມາດຕິດຕ **ACIR ຕາມເບີ 1800 653 809.**